# ສາຍນ້ຳຂອງຄືສາຍໃຈແມ່

ໂດຍ:  ສາວຫູ້ກເຈັດ

ສາຍນະທີຈາກຟ້າ    ໄຫຼມາສູ່ປັຕພີ
ມີຄວາມຍາວສຸດແສນ    ສູ່ດິນແດນໃຕ້
ກຳເນີດສາຍຂອງໄດ້    ຈາກດິນຈີນພູຕີເບດ
ໄດ້ຜ່ານລົງເຂດໃຕ້    ໄຫຼເຂົ້າອ່າວທະເລ

ນ້ຳເຊໄຫຼລັດຂ້າມ    ຕິດຕາມຕໍ່ເປັນສາຂາ
ນ້ຳຄານຍາວສຸດຕາ    ນ້ຳງື່ມລືຊາກ້ອງ
ນ້ຳງຽບນອງໄຫຼຂັ້ນ    ນ້ຳຊັນງາມຕາມຕະລິ່ງ
ນ້ຳກະດິງ  ສິ່ງສັກສິດຢູ່ໃຕ້    ຖວາຍໄທ້ກ່ອນຊິໄປ  ທ່ານເອີຍ

ນ້ຳຫີນບູນຢູ່ໃຕ້    ປາກຕົກໃສ່ສາຍຂອງ
ພີ່ນ້ອງພາຍໃນແຂວງ    ແຕ່ງແປງເປັນເມືອງບ້ານ
ຊື່ວ່າດອນໂດນນັ້ນ    ຈຸດສຳຄັນຄົນເຂົາຊ່າ
ໃຜກາຍມາໃຫ້ແວ່ຢ້ຽມ    ຊົມຫຼິ້ນຈຶ່ງຜ່ານໄປ

ເຊບັ້ງໄຟເປັນແມ່ນ້ຳ    ແຂວງຄຳມ່ວນທີ່ລືຊາ
ຕໍ່ລົງມາເຊບັງຫຽງ    ຖິ່ນພຽງສວັນຟ້າ
ຝົນຕົກມານອງລົ້ນ    ລຳເຊໂດນນ້ຳເຕັມຝັ່ງ
ໄຫຼຫຼັ່ງລົງສູ່ກ້ອງ    ເຊກອງນັ້ນຈັ່ງແມ່ນງາມ

ສາຍຂອງເປັນແມ່ນ້ຳ　　　ແສນສະອາດສົດໃສ
ເປັນສາຍໃຈຂອງຊາວລາວ　　　ທຸກເຜົ່າພົງພັນເຊື້ອ
ບໍ່ວ່າເໜືອຫຼືໃຕ້　　　ເໝືອນສາຍໃຈຂອງແມ່
ຄວາມຮັກແທ້ບໍ່ຊື່ນ　　　ລິນເລື້ອຍດັ່ງນ້ຳນົມ ທ່ານເອີຍ

ຜູ້ຂ້າຂໍກາບກົ້ມ　　　ພະນົມແມ່ພຣະຄຸນສູງ
ມຸ້ງໝາຍພຽນຖນອມບຸດ　　　ໃຫ້ໃຫຍ່ໄວຈະເລີນກ້າ
ປຽບໃສ່ປວງປະຊາເຊື້ອ　　　ໄປຕາມເຮືອລອຍລ່ອງ
ຕາມລຳຂອງຄົດໂຄ້ງ　　　ລົງໃຕ້ຮອດຫຼີ່ຜີ

ຄວາມສຳຄັນແມ່ນ້ຳນີ້　　　ປຽບດັ່ງສາຍໂລຫິດ
ຈິດໃຈລາວກົມກຽວ　　　ກ່ຽວພັນມານານລ້ຳ
ຈົ່ງຮັກສາສາຍນ້ຳ　　　ໃຈມານດາຢ່າມີໂສກ
ສິ່ງໂສໂຄກ ຢ່າໄດ້ປະປ່ອຍໄວ້　ຢ່າໄຫຼຖິ້ມໃສ່ແມ່ຂອງ　ທ່ານເອີຍ

ໃຫ້ທຸກຄົນປົກປ້ອງ　　　ລຳຂອງໃຫຍ່ໃຈຊາວລາວ
ເປັນນ້ຳຂາວບໍຣິສຸດ　　　ຜຸດຜ່ອງໃສໃຫ້ປາຊື່ນ
ລາວທຸກຄົນໃຈຫ້າວ　　　ຊາວປະມົງໄດ້ລົງລ່ອງ
ໃສ່ຜຽກມອງຢັ່ງໄວ້　　　ໄຫຼລົງໃຕ້ເພື່ອລັດປາ

ໃຈປະຊາບໍ່ແລ້ງ　　　ເໝືອນແກ້ງຕາດໂຕນຄອນ
ເກາະດອນມີຫຼາຍພັນ　　　ນັບບໍ່ທັນທຽມໄດ້

ໃສ່ຊື່ດິນດອນນັ້ນ ສີພັນດອນທີ່ລືຊ່າ
ຈຳປາສັກພັດຢູ່ຊ້ຳ ເມືອງໄຊງນັ້ນຊື່ດັງ ແທ້ດາຍ

ທຸກໆເມືອງທີ່ຕັ້ງ ເລາະຕາມຝັ່ງແຄມຂອງ
ຍາມນັ່ງມອງຕາເວັນຕົກ ຫມູ່ນົກກາຊິຄືນບ້ານ
ຈິດໃຈບານບໍ່ມີເສົ້າ ແນມເຫັນເງົາຍາມຄອຍຝັ່ງ
ສາຍນ້ຳຂອງທີ່ໄຫຼຫຼັ່ງ ດັ່ງໄລຫິດນຶ່ງກ້ອນ ອຸທອນທ້ອງແມ່ດຽວ ທ່ານເອີຍ

ໂດຍ: ສາວຫຼັກເຈັດ